Washington State Department of Social & Health Services
Transforming lives

ສຳຄັນ: ລາຍລະອຽດທີ່ຕ້ອງໃຫ້ທັນຕາມເວລາກ່ຽວກັບການບໍລິການຂອງທ່ານ.

HOME AND COMMUNITY SERVICES (HCS)
AREA AGENCY ON AGING (AAA)

# ການສະແດງໃຫ້ເຫັນການປ່ຽນແປງ **Medicaid**
# ໃບແຈ້ງການບໍລິການ
## Medicaid Transformation Demonstration Service Notice

**Client Name and Address** ວັນທີຂອງໃບແຈ້ງການ:

### ສະລູບຄວາມຂອງການບໍລິການ

ໃບແຈ້ງການໃບນີ້ຈະບອກທ່ານກ່ຽວກັບການບໍລິການຂອງທ່ານ. ມັນຍັງຈະບອກທ່ານກ່ຽວກັບສິດທີ່ທີ່ຈະຂໍອຸທອນຂອງທ່ານ.

**ອ່ານລາຍລະອຽດຢູ່ຂ້າງລຸ່ມນີ້. ທ່ານອາດຈະຕ້ອງໄດ້ເຮັດການກະທຳແນວໃດແນວນຶ່ງ.**

AAA ໄດ້ທຳການກະທຳຕໍ່ລົງໄປນີ້ກ່ຽວກັບການບໍລິການ ຫລື ຄຳຮ້ອງຂໍເອົາການບໍລິການຂອງທ່ານ. ການກະທຳຕໍ່ລົງໄປນີ້ຈະມີຜົນບັງຄັບໃຊ້ໄດ້ໃນ
ວັນທີ ໄປເຖິງ .

| ຂັ້ນຕອນ | ໂຄງການ | ການກະທຳ | ຫນ່ວຍ | ຈຳນວນເງິນ |
|---|---|---|---|---|
| | | | | |
| | | | | |
| | | | | |
| | | | | |

**ການກະທຳອັນນີ້ໄດ້ຖືກເຮັດລົງໄປໂດຍອີງຕາມສິດອຳນາດຕໍ່ລົງໄປນີ້:**

WAC 388-106-19 ____________

ອື່ນໆ: ______________________________________________

**ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳການກະທຳ ແລະ ຢາກຈະຂໍອຸທອນ, ທ່ານຕ້ອງໄດ້ຮູ້ຈັກ:**

- ຜູ້ພິພາກສາກົດຫມາຍການປົກຄອງຈະຟັງເຣື່ອງການອຸທອນຂອງທ່ານ.
- ທ່ານມີເວລາ 90 ວັນຈາກວັນທີຂອງໃບແຈ້ງການໃບນີ້ເພື່ອຈະອຸທອນຄຳຕັດສິນອັນນີ້.
- ທ່ານຈະຮ້ອງຂໍເອົາການຟັງເຣື່ອງໂດຍການຕິດຕໍ່ຫາຜູ້ຈັດການເອກສານຂອງທ່ານ. ເຂົາເຈົ້າສາມາດເອົາລາຍລະອຽດເພີ້ມເຕີມໃຫ້ໄດ້ອີກຄືກັນກ່ຽວກັບການດຳເນີນການຂອງການອຸທອນ.

### ລາຍລະອຽດກ່ຽວກັບການອຸທອນ

**ຂ້ອຍຈະໄດ້ເສັຽເງິນແນວໃດບໍ່ຖ້າຫາກວ່າຂ້ອຍຂໍອຸທອນການຕັດ ຫລື ການລຸດລົງໃນການບໍລິການ ແລະ ຂ້ອຍຜ່າຍແພ້ການຟັງເຣື່ອງ?**

- ທ່ານຈະຕ້ອງໄດ້ຈ່າຍເງິນໃຫ້ກົມ DSHS ຄືນສຳລັບຄ່າຂອງການບໍລິການທີ່ທ່ານໄດ້ຮັບໃນຂະນະທີ່ລໍຖ້າຄຳຕັດສິນຂອງການຟັງເຣື່ອງ. ເງິນຈຳນວນນີ້ສາມາດແມ່ນບໍ່ຫລາຍເກີນກວ່າການບໍລິການ 60 ວັນທີ່ກົມ DSHS ໄດ້ຈ່າຍອອກໄປ.
- ຫມາຍເຫດພິເສດກ່ຽວກັບສະວັດດີການພະຍາບານ: ຖ້າຫາກວ່າການບໍລິການເຫລົ່ານີ້ໄດ້ສິ້ນສຸດລົງຍ້ອນສະວັດດີການພະຍາບານໄດ້ຈົບລົງ, ທ່ານອາດຈະຕ້ອງໄດ້ຈ່າຍເງິນໃຫ້ກົມ DSHS ຄືນສຳລັບການບໍລິການທີ່ຖືກຈ່າຍເງິນໃຫ້ຈາກວັນທີ່ການບໍລິການພະຍາບານຂອງທ່ານໄດ້ສິ້ນສຸດລົງ.

**ສິດທິຂອງຂ້ອຍແມ່ນຫຍັງແດ່ກ່ອນ ແລະ ໃນເວລາການຟັງເຣື່ອງ?**

- ທ່ານສາມາດໃຫ້ຄົນອື່ນຄົນໃດຄົນນຶ່ງອີກໃຫ້ເປັນຕົວແທນຂອງທ່ານ.
- ບໍ່ມີຄົນໃດຈາກກົມ DSHS ສາມາດເປັນຕົວແທນຂອງທ່ານ.
- ຄວາມຊ່ວຍເຫລືອທາງດ້ານກົດຫມາຍຟຣີອາດຈະມີໄວ້ໃຫ້. ໂທຫາເລກ 1-888-201-1014 ເພື່ອລາຍລະອຽດເພີ້ມເຕີມ.
- DSHS ຈະບໍ່ຈ່າຍເງິນໃຫ້ຄົນໃດຄົນນຶ່ງເພື່ອຈະເປັນຕົວແທນຂອງທ່ານ.
- ທ່ານສາມາດເບິ່ງສຳນວນເອກສານ DSHS ຂອງທ່ານ. ທ່ານຈະໄດ້ໃບສຳເນົາຂອງສຳນວນເອກສານ DSHS ຂອງທ່ານຟຣີຖ້າຫາກວ່າທ່ານຂໍເອົາ.
- DSHS ບໍ່ສາມາດເອົາໃຫ້ທ່ານໄດ້ລາຍລະອຽດສ່ວນຕົວກ່ຽວກັບລູກຄ້າຄົນອື່ນ.
- ບາງເທື່ອກົມ DSHS ບໍ່ສາມາດເອົາໃຫ້ທ່ານໄດ້ລາຍລະອຽດທີ່ຖືກປົກປ້ອງໂດຍກົດຫມາຍ.
- ທ່ານຈະໄດ້ໃບອັດສຳເນົາຂອງລາຍລະອຽດທຸກໆຢ່າງທີ່ກົມ DSHS ໄດ້ໃຊ້ເພື່ອຈະທຳການຕັດສິນ.
- ທ່ານສາມາດຮ້ອງຂໍໃຫ້ຜູ້ພິພາກສາທີ່ຈະເບິ່ງເອກສານຕ່າງໆທີ່ທ່ານມີຢູ່.
- ທ່ານສາມາດມາໃຫ້ການໃນເວລາການຟັງເຣື່ອງ.
- ທ່ານສາມາດມີພະຍານມາໃຫ້ການໃນເວລາການຟັງເຣື່ອງ.
- ທ່ານສາມາດຖາມຄຳຖາມນຳພະຍານຂອງກົມ DSHS.

| ຊື່ຂອງຜູ້ຈັດການເອກສານ | ເລກໂທຣະສັບ<br>( ) | ທີ່ຢູ່ອີແມລ໌ |
|---|---|---|
| ທີ່ຢູ່ຂອງຂອງຜູ້ຈັດການເອກສານ | | |